ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 05 /ຈຂ.ອປ.

ອັດຕະປື, ວັນທີ 11 ພຶດສະພາ 2018.

# ຄຳສັ່ງ

## ວ່າດ້ວຍການຮິບໂຮມພາຫະນະ (ລົດ) ທີ່ຢຶດໄວ້ຕາມຈຸດຕ່າງໆໃນທົ່ວແຂວງ.

**ເຖິງ:** ພະແນກການຫ້ອງການທຽບເທົ່າອ້ອມຂ້າງແຂວງ.

- ຫ້ອງການຄຸ້ມຄອງດ່ານສາກົນພູເກືອ.
- ພາສີດ່ານສາກົນພູເກືອ.

**ເລື່ອງ:** ຮິບໂຮມພາຫະນະຢູ່ກົມກອງ ແລະ ຈຸດຕ່າງໆໃນທົ່ວແຂວງ ລວມທັງພາຫະນະທີ່ສານໄດ້ຕັດສິນຢຶດໄວ້ເປັນຂອງລັດແລ້ວ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 ໝວດ III ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ບົດບັນທຶກຂອງກອງປະຊຸມຄະນະປະຈຳພັກແຂວງ, ຮ່ວມກັບເຈົ້າແຂວງ, ຮອງເຈົ້າແຂວງ. ໃນຄັ້ງວັນທີ 07 ມີນາ 2018.
- ອີງຕາມ: ສະພາບການເຄື່ອນໄຫວຂອງກຸ່ມຄົນບໍ່ດີທີ່ເຄື່ອນໄຫວຜິດກົດໝາຍ ຕາມຂອບເຂດຊາຍແດນທີ່ໄດ້ກວດກາກັກຢຶດຕາມລະບຽບກົດໝາຍ ທີ່ກະແຈກກະຈາຍຢູ່ບຳພາກສ່ວນທີ່ກ່ຽວຂ້ອງ ທີ່ມີມູນຄ່າລະດັບສູງຍັງບໍ່ທັນໄດ້ປົກປັກຮັກສາ ແລະ ນຳໃຊ້ໃຫ້ມີປະໂຫຍດສູງສຸດ.

**ເຈົ້າແຂວງອອກຄຳສັ່ງດັ່ງນີ້:**

**ມາດຕາ 01:** ຮິບໂຮມພາຫະນະ (ລົດ) ທີ່ຢຶດໄວ້ນຳກົມກອງ ແລະ ຕາມຈຸດຕ່າງໆໃນທົ່ວແຂວງ, ທີ່ກຸ່ມຄົນບໍ່ດີໄດ້ໃຊ້ເຄື່ອນໄຫວລັກລອບຂົນຊັບພະຍາກອນທຳມະຊາດ ແລະ ລວມທັງພາຫະນະທີ່ສານໄດ້ຕັດສິນຢຶດໄວ້ເປັນຂອງລັດແລ້ວ.

**ມາດຕາ 02:** ມອບໃຫ້ຫ້ອງວ່າການແຂວງ, ພະແນກການເງິນແຂວງ ປະສານກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ. ພາຍຫຼັງສຳເລັດໃຫ້ລາຍງານການນຳຂອງແຂວງຮັບຊາບ ແລະ ມີທິດຊີ້ນຳ.

**ມາດຕາ 03:** ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

(ສ່ວນສະຖານທີ່ເກັບມ້ຽນ ແມ່ນໃຫ້ເຕົ້າໂຮມໄວ້ຢູ່ຫ້ອງວ່າການແຂວງ ຈຸດດຽວ).

ເຈົ້າແຂວງ

ເລັດ ໄຊຍະພອນ